# ການສົ່ງຕໍ່ການປະເມີນການໄດ້ຍິນເພື່ອການວິນິດໄສ

## ການນັດໝາຍເພື່ອປະເມີນວິນິດໄສແອນ້ອຍຂອງທ່ານ:

**ຊື່ແອນ້ອຍ:** ____________________________________________

**ວັນທີນັດໝາຍ:** ______________________ **ເວລາ:** ______________

**ສະຖານທີ່:** ____________________________________________

**ເບີໂທຕິດຕໍ່:** ____________________________________________

*ກະລຸນາໂທຕິດຕໍ່ຖ້າທ່ານຕ້ອງການນັດໝາຍເວລາໃໝ່.*

## ເປັນຫຍັງລູກຂອງຂ້າພະເຈົ້າຈຶ່ງຕ້ອງໄດ້ຮັບການປະເມີນການໄດ້ຍິນເພື່ອການວິນິດໄສ?

ແອນ້ອຍຂອງທ່ານບໍ່ຜ່ານການກວດຄັດກອງການໄດ້ຍິນ ຫຼືຜູ້ໃຫ້ບໍລິການດ້ານການດູແລສຸຂະພາບຂອງລແອນ້ອຍຂອງທ່ານອາດຈະຮ້ອງຂໍໃຫ້ມີການປະເມີນການໄດ້ຍິນເພື່ອການວິນິດໄສ. ມີຫຼາຍສິ່ງທີ່ອາດຈະລົບກວນການກວດຄັດກອງການໄດ້ຍິນ ຕົວຢ່າງເຊັ່ນ, ສຽງດັງໃນຫ້ອງ ຫຼື ແອນ້ອຍທີ່ກຳລັງເຄື່ອນໄຫວ. ການທົດສອບການໄດ້ຍິນໃຫ້ຄົບຖ້ວນສົມບູນໂດຍໄວທີ່ສຸດແມ່ນເປັນສິ່ງສຳຄັນ ເພື່ອພິຈາລະນາວ່າແອນ້ອຍຂອງທ່ານສາມາດໄດ້ຍິນໄດ້ດີປານໃດ.

## ມີແອນ້ອຍທີ່ສູນເສຍການໄດ້ຍິນຫຼາຍປານໃດ?

ແອນ້ອຍສ່ວນໃຫຍ່ເກີດມາພ້ອມການໄດ້ຍິນປົກກະຕິ. ຢ່າງໃດກໍ່ຕາມ ການສູນເສຍການໄດ້ຍິນຂັ້ນຮຸນແຮງພົບໃນແອນ້ອຍປະມານ 2-4 ຄົນໃນ 1,000 ຄົນ. ປະມານ 50% ຂອງແອນ້ອຍທີ່ສູນເສຍການໄດ້ຍິນບໍ່ມີສັນຍານຫຼືປັດໃຈສ່ຽງ ເຊັ່ນ: ພະຍາດຮ້າຍແຮງ ຫຼື ປະຫວັດການເປັນຫູໜວກໃນຄອບຄົວ. ມີພາວະຕ່າງໆຫຼາຍຢ່າງທີ່ອາດຈະເກີດຂຶ້ນກ່ອນຄອດ, ໃນຊ່ວງໄວແອນ້ອຍ ຫຼືໃນໄວເດັກ ເຊິ່ງອາດຈະສົ່ງຜົນຕໍ່ການໄດ້ຍິນຂອງເດັກໄດ້. ການສູນເສຍການໄດ້ຍິນພາຍຫຼັງໃນໄວເດັກອາດຈະເປັນຜົນມາຈາກການຕິດເຊື້ອຫູຊ້ຳແລ້ວຊ້ຳອີກ, ເຍື່ອຫຸ້ມສະໝອງອັກເສບ, ການບາດເຈັບທີ່ຫົວ ຫຼືອາການເຈັບປ່ວຍອື່ນໆ.

ຢາທີ່ຊ່ວຍໃຫ້ມີຊີວິດລອດອາດຈະເຮັດໃຫ້ເກີດການສູນເສຍການໄດ້ຍິນ. ບາງຄັ້ງແອນ້ອຍສູນເສຍການໄດ້ຍິນໂດຍບໍ່ຮູ້ສາເຫດ. ປຶກສາກັບທ່ານໝໍຂອງລູກຂອງທ່ານຖ້າທ່ານມີຄຳຖາມຫຼືຂໍ້ກັງວົນໃດໆ.

## ເປັນຫຍັງຈຶ່ງຕ້ອງທົດສອບແອນ້ອຍ?

ການກວດພົບການສູນເສຍການໄດ້ຍິນຄວນເກີດຂຶ້ນຕັ້ງແຕ່ຊ່ວງທຳອິດຂອງຊີວິດໃຫ້ໄວທີ່ສຸດ. ຊ່ວງເດືອນທຳອິດຂອງຊີວິດຂອງເດັກນ້ອຍແມ່ນມີຄວາມສຳຄັນຫຼາຍສຳລັບການພັດທະນາທັກສະການສື່ສານ. ແອນ້ອຍທີ່ສູນເສຍການໄດ້ຍິນ ຫຼືຫູໜວກ ອາດຈະມີບັນຫາໃນການພັດທະນາທັກສະທາງພາສາປົກກະຕິ ຫຼືອາດຈະຮຽນໄດ້ບໍ່ດີໃນໂຮງຮຽນ. ຍິ່ງກວດພົບການສູນເສຍການໄດ້ຍິນຂອງເດັກນ້ອຍໄດໄວເທົ່າໃດ ກໍ່ສາມາດໃຫ້ຄວາມຊ່ວຍເຫຼືອໄດ້ໄວຂຶ້ນເທົ່ານັ້ນ.

## ການປະເມີນການໄດ້ຍິນເພື່ອການວິນິດໄສແມ່ນຫຍັງ?

ການປະເມີນການໄດ້ຍິນເພື່ອການວິນິດໄສແມ່ນອີກບາດກ້າວໜຶ່ງໃນການທົດສອບການໄດ້ຍິນຂອງແອນ້ອຍ. ການປະເມີນປະກອບດ້ວຍການທົດສອບຫຼາຍຢ່າງເພື່ອໃຫ້ໄດ້ພາບລວມຂອງການໄດ້ຍິນຂອງແອນ້ອຍຂອງທ່ານ. ການປະເມີນຈະດຳເນີນການໂດຍນັກໂສຕສຳຜັດວິທະຍາ ເຊິ່ງເປັນຜູ້ຊ່ຽວຊານດ້ານການໄດ້ຍິນ.

## ການປະເມີນການໄດ້ຍິນເພື່ອການວິນິດໄສເຮັດໄດ້ແນວໃດ?

ໃນຂະນະທີ່ແອນ້ອຍຂອງທ່ານກຳລັງພັກຜ່ອນຫຼືນອນຫຼັບ
ຈະມີການໃຊ້ອຸປະກອນພິເສດໃນການເປີດສຽງຄ່ອຍໆ
ຜ່ານຫູຟັງທີ່ຜະລິດຂຶ້ນເປັນພິເສດສຳລັບການທົດສອບການໄດ້ຍິນຂອງແອນ້ອຍ.
ຂັ້ນຕອນທັງໝົດແມ່ນບໍ່ເຈັບປວດ.
ການຕອບສະໜອງຂອງລແອນ້ອຍຕໍ່ກັບສຽງຈະຖືກບັນທຶກດ້ວຍລະບົບເອເລັກໂຕຣນິກຜ່ານຫູຟັງຫຼືຜ່ານສາຍໄຟຂະໜາດນ້ອຍທີ່ຕິດດ້ວຍແຜ່ນໜຽວທີ່ຕິດຢູ່ຫົວ. ເນື່ອງຈາກມີການທົດສອບຫຼາຍຢ່າງຂຶ້ນ ການປະເມີນການໄດ້ຍິນເພື່ອການວິນິດໄສຈຶ່ງໃຊ້ເວລາດົນນານກວ່າການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່. ເປັນໄປໄດ້ວ່າທ່ານອາດຈະຢູ່ຫ້ອງກວດເປັນເວລາໜຶ່ງຊົ່ວໂມງຫຼືດົນກວ່ານັ້ນ ແລະອາດຈະຕ້ອງກັບຄືນມາເພື່ອກວດອີກຄັ້ງ.

## ໃຜເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການປະເມີນການໄດ້ຍິນເພື່ອການວິນິດໄສ?

ຄ່າໃຊ້ຈ່າຍໃນການປະເມີນການໄດ້ຍິນເພື່ອການວິນິດໄສຄຸ້ມຄອງໂດຍແຜນປະກັນສຸຂະພາບຫຼາຍແຜນ.
Medi-Cal ແລະ California Children’s Services (CCS)
ຈະຈ່າຍຄ່າປະເມີນສຳລັບເດັກນ້ອຍທີ່ເຂົ້າເກນ.
ຖ້າທ່ານມີຄຳຖາມໃດໆກ່ຽວກັບການຊຳລະເງິນສຳລັບການປະເມີນນີ້
ກະລຸນປຶກສາກັບທ່ານໝໍຂອງແອນ້ອຍຂອງທ່ານ ຫຼືຜູ້ໃຫ້ບໍລິການດ້ານການດູແລສຸຂະພາບ ຫຼືໂທເບີ
1-877-388-5301.

# ສິ່ງທີ່ທ່ານສາມາດເຮັດໄດ້ເພື່ອກະກຽມສຳ ລັບການປະເມີນການໄດ້ຍິນເພື່ອການວິນິດໄສຂອງແອນ້ອຍແມ່ນຫຍັງ

ແອນ້ອຍຂອງທ່ານຕ້ອງນອນຫຼັບຢ່າງສະບາຍຕະຫຼອດໄລຍະເວລາການປະເມີນການໄດ້ຍິນເພື່ອວິນິດໄສ. ຄຳແນະນຳເຫຼົ່ານີ້ອາດຈະຊ່ວຍໃຫ້ທ່ານກະກຽມແອນ້ອຍຂອງທ່ານໃຫ້ພັກຜ່ອນໄດ້ຢ່າງສະບາຍ:

- ພະຍາຍາມບໍ່ໃຫ້ແອນ້ອຍນອນຫຼັບກ່ອນມາຕາມນັດໝາຍ.
- ການໃຫ້ອາຫານແອນ້ອຍກ່ອນການທົດສອບອາດຈະຊ່ວຍໃຫ້ແອນ້ອຍນອນຫລັບໄດ້
- ເອົາຜ້າຫົ່ມ, ຜ້າອ້ອມສຳຮອງ, ເຄື່ອງນຸ່ງສຳລັບປ່ຽນ ແລະນົມຜົງມາເພື່ອເຊັ່ນກັນ (ຖ້າໃຊ້).
- ທ່ານສາມາດລອງນັດໝາຍການທົດສອບແອນ້ອຍຂອງທ່ານໃນຊ່ວງເວລາທີ່ລູກຂອງທ່ານໜ້າຈະນອນຫຼັບໄດ້.

# ຈະເກີດຫຍັງຂຶ້ນຫຼັງຈາກການປະເມີນ?

ທ່ານຈະໄດ້ຮັບແຈ້ງຜົນການປະເມີນແລະໄດ້ຮັບບົດລາຍງານ. ບົດລາຍງານຈະຖືກສົ່ງໄປຫາຜູ້ໃຫ້ບໍລິການດ້ານການດູແລສຸຂະພາບຂອງແອນ້ອຍຂອງທ່ານ. ຖ້າກວດພົບການສູນເສຍການໄດ້ຍິນ ທ່ານຈະຖືກສົ່ງຕໍ່ໄປຫາໂຄງການພິເສດແລະແຫຼ່ງຊັບພະຍາກອນໃນຊຸມຊົນ. ສູນປະສານງານໂຄງການກວດຄັດກອງການໄດ້ຍິນເດັກເກີດໃໝ່ຂອງລັດຄາລິຟໍເນຍອາດຈະຕິດຕໍ່ເພື່ອຊ່ວຍເຫຼືອທ່ານແລະລູກຂອງທ່ານໃຫ້ໄດ້ຮັບການບໍລິການທີ່ທ່ານຕ້ອງການ.

# ສັງເກດເບິ່ງພັດທະນາການຂອງແອນ້ອຍຂອງທ່ານ

ຖ້າການປະເມີນເພື່ອການວິນິດໄສສະແດງໃຫ້ເຫັນວ່າແອນ້ອຍຂອງທ່ານບໍ່ມີການສູນເສຍການໄດ້ຍິນ ທ່ານຄວນໃຫ້ແອນ້ອຍໄດ້ຮັບການທົດສອບການໄດ້ຍິນໃນຂະນະທີ່ລູກຂອງທ່ານຈະເລີນເຕີບໂຕ. ການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ແມ່ນຂັ້ນຕອນທຳອິດເທົ່ານັ້ນໃນການສັງເກດພັດທະນາການດ້ານການໄດ້ຍິນ, ການປາກເວົ້າ ແລະພາສາຂອງແອນ້ອຍຂອງທ່ານ. ແອນ້ອຍບາງຄົນສູນເສຍການໄດ້ຍິນໃນພາຍຫຼັງເມື່ອເຕີບໃຫຍ່ ດັ່ງນັ້ນ ການເອົາໃຈໃສ່ໃນພັດທະນາການດ້ານພາສາແລະການປາກເວົ້າຂອງແອນ້ອຍຈຶ່ງເປັນສິ່ງທີ່ສະຄັນສະເໝີ.

# ໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ຂອງລັດຄາລິຟໍເນຍ

ເປົ້າໝາຍຂອງໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ຂອງລັດຄາລິຟໍເນຍ (NHSP) ແມ່ນເພື່ອລະບຸແອນ້ອຍທີ່ສູນເສຍການໄດ້ຍິນ ແລະເຊື່ອມຕໍ່ເຂົາເຈົ້າໄປຫາບໍລິການຕ່າງໆພາຍໃນອາຍຸຫົກເດືອນ.

ໂຄງການນີ້ມີສູນປະສານງານການໄດ້ຍິນທີ່ເຮັດວຽກກັບຄອບຄົວ, ຜູ້ໃຫ້ບໍລິການດ້ານການດູແລສຸຂະພາບ ແລະ ໂຮງໝໍເພື່ອຮັບປະກັນວ່າເດັກນ້ອຍຈະໄດ້ຮັບການບໍລິການທີ່ຈຳເປັນ.

ໂຄງການ NHS ເກັບກຳຂໍ້ມູນກ່ຽວກັບການກວດຄັດກອງການໄດ້ຍິນຂອງແອນ້ອຍຂອງທ່ານຕາມມາດຕາ 124119 ຂອງປະມວນກົດໝາຍສຸຂະພາບ ແລະຄວາມປອດໄພ.
ສູນປະສານງານການໄດ້ຍິນອາດຈະໃຊ້ຂໍ້ມູນນີ້ເພື່ອຊ່ວຍເຫຼືອທ່ານແລະແອນ້ອຍຂອງທ່ານໃນການໄດ້ຮັບບໍລິການທີ່ທ່ານອາດຈຳເປັນ.
ສູນປະສານງານການໄດ້ຍິນອາດຈະຕິດຕໍ່ທ່ານກ່ຽວກັບການບໍລິການຕິດຕາມຜົນ.
ທ່ານສາມາດຕິດຕໍ່ເຂົາເຈົ້າເພື່ອຂໍຄວາມຊ່ວຍເຫຼືອໄດ້ທຸກເວລາ.

**ຖ້າຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່**

- ກະລຸນາໂທໄປທີ່ເບີໂທຟຣີ 1-877-388-5301
- ຫຼືເຂົ້າໄປເບິ່ງພວກເຮົາໃນເວັບໄຊທີ່ www.dhcs.ca.gov/services/nhsp